①

# ເອັມອາຣຊີ ຮ່ວມມືກັບສອງ ໂຄງການພັດທະນາລຸ່ມແມ່ນ້ຳຂອງ




ຂ່າວ: ໄພບູນ

✷ ຄະນະກຳມາທິການແມ່ນ້ຳຂອງສາກົນ (MRC) ຮ່ວມມືກັບສອງໂຄງການລະຫວ່າງລາວກັບກຳປູເຈຍ ແລະກຳປູເຈຍ-ໄທ ເພື່ອບໍລິຫານຈັດການຊັບພະຍາກອນທຳມະຊາດລຸ່ມແມ່ນ້ຳຂອງ ແລະການແກ້ໄຂບັນຫາໄພແຫ້ງແລ້ງ ແລະໄພນ້ຳຖ້ວມ.

ອ່ານຕໍ່ໜ້າ 11

②

## ເອັມອາຣຊີ...

ໂຄງການດັ່ງກ່າວພາຍໃຕ້ການສະໜອງທຶນຂອງລັດຖະບານເຢຍລະມັນໂດຍຜ່ານໂຄງການ GIZ ໂຄງການໄດ້ມີການມຸ່ງເນັ້ນໄປທີ່ການພັດທະນາແຜນການຈັດສັນແຫຼ່ງນ້ຳໃນເຂດນ້ຳຕົກຄອນພະເພັງລະຫວ່າງລາວກັບກຳປູເຈຍ, ພ້ອມດຽວກັນນັ້ນກໍຍັງມີການກອດກາຜົນກະທົບຈາກໂຄງການດອນສະໂຮງ ແລະຮ່ວມຕ້ານໄພແຫ້ງແລ້ງ ແລະໄພນ້ຳຖ້ວມຕາມເຂດຊາຍແດນລຸ່ມແມ່ນ້ຳຂອງລະຫວ່າງກຳປູເຈຍ ແລະໄທ.

ທ່ານ Pham Tuan Phan ຫົວໜ້າ

③

ຫ້ອງການຄະນະກຳມາທິການແມ່ນ້ຳຂອງສາກົນ ກ່າວວ່າ: ພວກເຮົາມີຄວາມຍິນດີເປັນຢ່າງຍິ່ງທີ່ສອງໂຄງການດັ່ງກ່າວໄດ້ປະກອບສ່ວນໃນການສະໜອງທຶນເພື່ອສະໜັບສະໜູນໃນການດຳເນີນງານຂອງໂຄງການ ຊຶ່ງໂຄງການດັ່ງກ່າວຄາດວ່າຈະມີສ່ວນຮ່ວມໃນການປັບປຸງລະບົບຄວາມປອດໄພຂອງນ້ຳ ແລະສະໜັບສະໜູນການພັດທະນາເສດຖະກິດ-ສັງຄົມໃນພາກພື້ນເປັນຢ່າງດີ.

ໂຄງການ GIZ ໄດ້ເປັນຄູ່ຮ່ວມມືໃນການພັດທະນາກັບຄະນະກຳມາທິການລຸ່ມແມ່ນ້ຳຂອງມາເປັນເວລາດົນນານ, ໄດ້ປະກອບສ່ວນຊ່ວຍສະໜອງທຶນແກ່ບັນດາອົງກອນໃນຫຼາຍພື້ນທີ່ ຊຶ່ງປະກອບດ້ວຍການຈັດການຊັບພະຍາກອນນ້ຳ, ຕ້ານໄພແຫ້ງແລ້ງ, ຕ້ານການປ່ຽນແປງຂອງດິນຟ້າອາກາດ, ພະລັງງານນ້ຳແບບຍືນຍົງ ແລະອື່ນໆ.

ກອງປະຊຸມດັ່ງກ່າວຈັດຂຶ້ນໃນວັນທີ 16 ມັງກອນ 2017, ທີ່ນະຄອນຫຼວງວຽງຈັນ ພາຍໃຕ້ການເຂົ້າຮ່ວມຂອງທ່ານ Pham Tuan Phan, ຫົວໜ້າຫ້ອງການຄະນະກຳມາທິການແມ່ນ້ຳຂອງສາກົນ, ທ່ານ Bertrand Meinier, ຫົວໜ້າໂຄງການຮ່ວມມື MRC- GIZ ພ້ອມດ້ວຍບັນດາພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

MRC Cooperate in joint lower mekong development projects, Socio-Economic Newspaper, 19 January 2018.